**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0782 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 15 ພຶດສະພາ 2024

# ຂໍ້ຕົກລົງ
# ວ່າດ້ວຍລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການເຕັກນິກຕໍ່ການຄ້າ (Technical Barriers to Trade-TBT) ກ່ອນການນຳເຂົ້າ ແລະ ການສົ່ງອອກ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ດຳລັດ ວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ເລກທີ 114/ລບ, ລົງວັນທີ 06 ເມສາ 2011;
- ອີງຕາມ ການສະເໜີຂອງກົມການຄ້າຕ່າງປະເທດ ເລກທີເລກທີ 1606/ກຄຕ, ລົງວັນທີ 25 ເມສາ 2024.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດລາຍການສິນຄ້າ ທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການເຕັກນິກຕໍ່ການຄ້າ (Technical Barriers to Trade-TBT) ກ່ອນການນຳເຂົ້າ ແລະ ການສົ່ງອອກ.

### ມາດຕາ 2 ລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການເຕັກນິກຕໍ່ການຄ້າ (TBT) ກ່ອນການນຳເຂົ້າ ແລະ ການສົ່ງອອກ.

ລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການເຕັກນິກຕໍ່ການຄ້າ (TBT) ກ່ອນການນຳເຂົ້າ ແລະ ການສົ່ງອອກ ແມ່ນປະເພດສິນຄ້າທີ່ຕ້ອງໄດ້ຮັບການຢັ້ງຢືນ, ການກວດສອບ ຫຼື ການກວດກາຄວາມສອດຄ່ອງກັບມາດຕະຖານບັງຄັບ ແລະ ລະບຽບການເຕັກນິກ.

### ມາດຕາ 3 ຂອບເຂດການນາໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ ນິຕິບຸກຄົນ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກສິນຄ້າ ຢູ່ ສປປ ລາວ.

### ມາດຕາ 4 ຕາຕະລາງລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການເຕັກນິກຕໍ່ການຄ້າ (TBT) ກ່ອນການນຳເຂົ້າ.

ລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການເຕັກນິກຕໍ່ການຄ້າ (TBT) ກ່ອນການນຳເຂົ້າ ໃຫ້ອີງຕາມລະຫັດສາລະບານອັດຕາພາສີ ລາຍລະອຽດຕາມຕາລະລາງ ດັ່ງນີ້:

| ລ/ດ | ລະຫັດພາສີ | ລາຍການສິນຄ້າ | ມາດຕະການ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການ ຢັ້ງຢືນ | ຮູບແບບ ການຢັ້ງຢືນ |
|---|---|---|---|---|---|---|---|
| 01 | 8702<br>8703<br>8704<br>8705<br>8711 | ພາຫະນະທາງບົກທຸກປະເພດ ທີ່ແລ່ນດ້ວຍເຄື່ອງຈັກ ທີ່ມີສອງລໍ້ຂຶ້ນໄປ ມີຄົນຂັບ ແລະ ບໍ່ມີຄົນຂັບ. | ຕ້ອງໄດ້ມີຢັ້ງຢືນດ້ານເຕັກນິກອອກໂດຍປະເທດຕົ້ນທາງຕ້ອງມີມາດຕະຖານ ແລະ ເງື່ອນໄຂຕາມທີ່ກົມຂົນສົ່ງກຳນົດໄວ້ | ເພື່ອຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ການຄຸ້ມຄອງຄຸນນະພາບ ແລະ ປົກປ້ອງຜົນປະໂຫຍດສູງສຸດ ຂອງຜູ້ບໍລິໂພກ | - ກົດໝາຍ ວ່າດ້ວຍຍານພາຫະນະທາງບົກ ສະບັບເລກທີ 04/ສພຊ, ລົງວັນທີ 16 ພະຈິກ 2021;<br>- ດຳລັດ ວ່າດ້ວຍການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ເລກທີ 470/ລບ, ລົງວັນທີ 27 ທັນວາ 2019. | ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ | ຢັ້ງຢືນທຸກຄັ້ງກ່ອນການນຳເຂົ້າ ແລະ ສົ່ງອອກ |
| 02 | 2710.12.11<br>2710.12.14<br>2710.12.20<br>2710.19.71<br>2710.19.79<br>2710.19.83 | ຜະລິດຕະພັນນ້ຳມັນທີ່ນຳໃຊ້ເປັນເຊື້ອໄຟເຜົາໄໝ້ ຄື:<br>- ນ້ຳມັນແອັດຊັງພິເສດ;<br>- ນ້ຳມັນແອັດຊັງທຳມະດາ;<br>- ນ້ຳມັນກາຊວນ;<br>- ນ້ຳມັນກາດເຮືອບິນ **(Jet A-1)**;<br>- ນ້ຳມັນກາດໃຕ້ **(Kerosene)**<br>- ນ້ຳມັນເຕົາ;<br>- ນ້ຳມັນເຄື່ອງ | ຕ້ອງໄດ້ຮັບການກວດສອບ ແລະ ຢັ້ງຢືນ ເພື່ອໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມມາດຕະຖານແຫ່ງຊາດທີ່ກຳນົດໄວ້ | ເພື່ອເປັນການຄຸ້ມຄອງຄຸນນະພາບຂອງສິນຄ້ານຳເຂົ້າ-ສົ່ງອອກ ຊຶ່ງຈຳເປັນຕ້ອງໄດ້ປະຕິບັດຕາມມາດຕະຖານແຫ່ງຊາດທີ່ກຳນົດໄວ້ ແລະ ທັງເປັນການເກັບກຳສະພາບການນຳເຂົ້າ ແລະ ບໍລິສັດນຳເຂົ້າໄດ້ຢ່າງຊັດເຈນ | - ກົດໝາຍ ວ່າດ້ວຍມາດຕະຖານ ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014;<br>- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບນ້ຳມັນເຊື້ອໄຟ ສະບັບເລກທີ 0541/ກອຕ, ລົງວັນທີ 08 ມິຖຸນາ 2016;<br>- ຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ມາດຕະຖານບັງຄັບ ກ່ຽວກັບຜະລິດຕະພັນນ້ຳມັນເຊື້ອໄຟ ສະບັບເລກທີ 0011/ກອຕ, ລົງວັນທີ 07 ມິຖຸນາ 2021. | ກົມມາດຕະຖານ ແລະ ວັດແທກ, ກະຊວງອຸດສາຫະກຳ ແລະ ການຄ້າ | ກວດການມາດຕະຖານ ແລະ ຢັ້ງຢືນຄຸນນະພາບ ທຸກຄັ້ງກ່ອນການນຳເຂົ້າ ແລະ ສົ່ງອອກ |
| 03 | 2711 | ອາຍແກັດຫຸງຕົ້ມ (LPG) | ຕ້ອງໄດ້ຮັບການກວດສອບ ແລະ ຢັ້ງຢືນ ເພື່ອໃຫ້ຖືກຕ້ອງ ແລະ ສອດ ຄ່ອງຕາມມາດຕະຖານແຫ່ງຊາດທີ່ກຳນົດໄວ້ | ເພື່ອເປັນການຄຸ້ມຄອງຄຸນນະພາບຂອງສິນຄ້ານຳເຂົ້າ-ສົ່ງອອກ ຊຶ່ງຈຳເປັນຕ້ອງໄດ້ປະຕິບັດຕາມມາດຕະຖານແຫ່ງຊາດທີ່ກຳນົດໄວ້ ແລະ ທັງເປັນການເກັບກຳສະ ພາບການນຳເຂົ້າ ແລະ ບໍລິສັດນຳເຂົ້າໄດ້ຢ່າງຊັດເຈນ | - ກົດໝາຍ ວ່າດ້ວຍມາດຕະຖານ ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014;<br>- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ, ກວດກາ ແລະ ຢັ້ງຢືນຄຸນນະພາບນ້ຳມັນເຊື້ອໄຟ ເລກທີ 0541/ກອຕ, ລົງວັນທີ 08 ມິຖຸນາ 2016;<br>- ຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ມາດຕະຖານບັງຄັບ ກ່ຽວກັບຜະລິດຕະພັນນ້ຳມັນ | ກົມມາດຕະຖານ ແລະ ວັດແທກ, ກະຊວງອຸດສາຫະກຳ ແລະ ການຄ້າ | ກວດການມາດຕະຖານ ແລະ ຢັ້ງຢືນຄຸນນະພາບ ທຸກຄັ້ງກ່ອນການນຳເຂົ້າ ແລະ ສົ່ງອອກ |

| ລ/ດ | ລະຫັດພາສີ | ລາຍການສິນຄ້າ | ມາດຕະການ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການ ປົ່ງປັນ | ຮູບແບບ ການປົ່ງປັນ |
|---|---|---|---|---|---|---|---|
| | | | | | ເຊື້ອໄຟ ສະບັບເລກທີ 0011/ກອຕ, ລົງວັນທີ 07 ມິຖຸນາ 2021. | | |
| 04 | 9028.30 | ໝໍ້ນັບໄຟຟ້າ | ຕ້ອງໄດ້ມີຢັ້ງຢືນມາດຕະຖານດ້ານເຕັກນິກຈາກປະເທດຕົ້ນທາງຕ້ອງມີມາດຕະຖານ ແລະ ເງື່ອນ ໄຂ ຕາມ ທີ່ກົມມາດຕະ ຖານ ແລະ ວັດແທກ ກຳ ນົດໄວ້ | ເພື່ອຮັບປະກັນຄຸນນະພາບ ແລະ ປົກປ້ອງຄວາມຍຸຕິທຳຂອງສັງຄົມ | - ກົດໝາຍ ວ່າດ້ວຍການວັດແທກ ສະບັບເລກທີ 36/ສພຊ, ລົງວັນທີ 13 ທັນວາ 2013;<br>- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງໝໍ້ນັບໄຟຟ້າ ຢູ່ ສປປ ລາວ ສະບັບເລກທີ 1014/ກອຕ, ລົງວັນທີ 26 ກັນຍາ 2016. | ກົມມາດຕະຖານ ແລະ ວັດແທກ, ກະຊວງອຸດສາຫະກຳ ແລະ ການຄ້າ | ຂຶ້ນທະບຽນ ແລະ ກວດສອບຄວາມສອດເຈນກ່ອນນຳໄປນຳໃຊ້. |
| 05 | 9028.20 | ໝໍ້ແທກນ້ຳປະປາ | ຕ້ອງໄດ້ມີຢັ້ງຢືນມາດຕະຖານດ້ານເຕັກນິກຈາກປະເທດຕົ້ນທາງຕ້ອງມີມາດຕະຖານ ແລະ ເງື່ອນ ໄຂ ຕາມທີ່ກົມມາດຕະຖານ ແລະ ວັດແທກ ກຳນົດໄວ້ | ເພື່ອຮັບປະກັນຄຸນນະພາບ ແລະ ປົກປ້ອງຄວາມຍຸຕິທຳຂອງສັງຄົມ | - ກົດໝາຍ ວ່າດ້ວຍການວັດແທກ ສະບັບເລກທີ 36/ສພຊ, ລົງວັນທີ 13 ທັນວາ 2013;<br>- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງໝໍ້ແທກນ້ຳປະປາ ສະບັບເລກທີ 0543 /ກອຕ, ລົງວັນທີ 16 ພຶດສະພາ 2017. | ກົມມາດຕະຖານ ແລະ ວັດແທກ, ກະຊວງອຸດສາຫະກຳ ແລະ ການຄ້າ | ຂຶ້ນທະບຽນ ແລະ ກວດສອບຄວາມສອດເຈນກ່ອນນຳໄປນຳໃຊ້. |
| 06 | 8423 | ຊິງຊັ່ງນ້ຳໜັກທຸກປະເພດ | ຕ້ອງໄດ້ມີຢັ້ງຢືນມາດຕະຖານດ້ານເຕັກນິກຈາກປະເທດຕົ້ນທາງຕ້ອງມີມາດຕະຖານ ແລະ ເງື່ອນໄຂ ຕາມທີ່ກົມມາດຕະຖານ ແລະ ວັດແທກ ກຳນົດໄວ້ | ເພື່ອຮັບປະກັນຄຸນນະພາບ ແລະ ປົກປ້ອງຄວາມຍຸຕິທຳຂອງສັງຄົມ | - ກົດໝາຍ ວ່າດ້ວຍການວັດແທກ ສະບັບເລກທີ 36/ສພຊ, ລົງວັນທີ 13 ທັນວາ 2013;<br>- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຊິງຊັ່ງ ສະບັບເລກທີ 0544/ກອຕ, ລົງວັນທີ 16 ພຶດສະພາ 2017. | ກົມມາດຕະຖານ ແລະ ວັດແທກ, ກະຊວງອຸດສາຫະກຳ ແລະ ການຄ້າ | ຂຶ້ນທະບຽນ ແລະ ກວດສອບຄວາມສອດເຈນກ່ອນນຳໄປນຳໃຊ້. |

| ລ/ດ | ລະຫັດພາສີ | ລາຍການສິນຄ້າ | ມາດຕະການ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການ ຢັ້ງຢືນ | ຮູບແບບ ການຢັ້ງຢືນ |
|---|---|---|---|---|---|---|---|
| 07 | 8443<br>8471<br>8517<br>8518<br>8525<br>8526<br>8527<br>8528<br>8530<br>8531 | ອຸປະກອນຄື້ນຄວາມຖີ່ວິທະຍຸ ສື່ສານ, ໂທລະຄົມມະນາຄົມ ແລະ ໄອຊີທີ | ຢັ້ງຢືນມາດຕະຖານ ເຕັກນິກ RF, EMF, EMC, SAR, connection ແລະ safety | ເພື່ອຮັບປະກັນຄວາມໝັ້ນຄົງ, ຄວາມປອດໄພ,ຄວາມເປັນລະບຽບຮຽບຮ້ອຍ, ຄຸນນະພາບ, ມາດຕະຖານ ແລະປ້ອງກັນການລົບກວນ | - ກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;<br>- ກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ ສະບັບເລກທີ 05/ສພຊ, ວັນທີ 17 ພະຈິກ 2021;<br>- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງອຸປະກອນໂທລະຄົມມະນາຄົມ ແລະ ໄອຊີທີ ສະບັບເລກທີ 3583/ກຕສ, ລົງວັນທີ 13 ທັນວາ 2022;<br>- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຄວາມປອດໄພດ້ານຄວາມແຮງທົ່ງແມ່ເຫຼັກໄຟຟ້າຂອງສະຖານີຮັບສົ່ງສັນຍານໂທລະສັບເຄື່ອນທີ່ ສະບັບເລກທີ 3579/ກຕສ, ລົງວັນທີ 13 ທັນວາ 2022;<br>- ຂໍ້ຕົກລົງ ວ່າດ້ວຍກາໝາຍຢັ້ງຢືນທາງດ້ານເຕັກນິກອຸປະກອນໂທລະຄົມມະນາຄົມ ແລະ ໄອຊີທີ ສະບັບເລກທີ 1495/ກຕສ, ລົງວັນທີ 29 ພຶດສະພາ 2023. | ກົມຄື້ນຄວາມຖີ່ວິທະຍຸສື່ສານ, ກະຊວງເຕັກໂນໂລຊີ ແລະ ການສື່ສານ | ກວດກາ ແລະ ຢັ້ງຢືນ ທຸກຄັ້ງກ່ອນການນຳເຂົ້າ |

**ໝາຍເຫດ**:

ສຳລັບສິນຄ້າທີ່ກຳນົດໃນຕາຕະລາງ ຂອງຂໍ້ຕົກລົງສະບັບນີ້ ທີ່ບໍ່ໄດ້ກຳນົດລະຫັດສິນຄ້າ ຫຼື ກຳນົດແລ້ວ ແຕ່ ບໍ່ຈະແຈ້ງ ຫຼື ບໍ່ຄົບຖ້ວນ ແມ່ນຂະແໜງການກ່ຽວຂ້ອງຈະສົມທົບກັບລັດຖະການພາສີໃນການຈັດເລກລະຫັດສິນຄ້າ ຂອງສິນຄ້າຕົວຈິງ ໃຫ້ຖືກຕ້ອງ ແລະ ສອດ ຄ່ອງກັບເນື້ອໃນລາຍລະອຽດຂອງສິນຄ້າ ຕາມທີ່ໄດ້ກຳນົດໃນສາລະບານອັດຕາພາສີເອກະພາບ.

**ມາດຕາ 5 ລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການເຕັກນິກຕໍ່ການຄ້າ (TBT) ກ່ອນການສົ່ງອອກ**

ລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການເຕັກນິກຕໍ່ການຄ້າ (**TBT**) ກ່ອນການສົ່ງອອກ ໃຫ້ປະຕິບັດຕາມລະບຽບການ ຂອງປະເທດປາຍທາງ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ການປັບປຸງລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການເຕັກນິກຕໍ່ການຄ້າ (TBT) ກ່ອນການນໍາເຂົ້າ ແລະ ການສົ່ງອອກ**

ການປັບປຸງລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການເຕັກນິກຕໍ່ການຄ້າ (TBT) ກ່ອນການນໍາເຂົ້າ ແມ່ນການເພີ່ມ ຫຼື ຫຼຸດລາຍການ ທີ່ກໍານົດໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

ການປັບປຸງລາຍການສິນຄ້າແຕ່ລະຄັ້ງ ຕ້ອງໄດ້ຮັບການອະນຸມັດຈາກ ລັດຖະມົນຕີ, ກະຊວງອຸດສາຫະກໍາ ແລະ ການຄ້າ ຕາມການຄົ້ນຄວ້າ ແລະ ສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ.

ພາຍຫຼັງທີ່ໄດ້ປັບປຸງລາຍການສິນຄ້າສໍາເລັດແລ້ວ ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງໄດ້ແຈ້ງໃຫ້ຂະແໜງການກ່ຽວຂ້ອງ ຮັບຊາບ ແລະ ຈັດຕັ້ງປະຕິບັດ.

**ມາດຕາ 7 ການຍື່ນຄໍາຮ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການເຕັກນິກຕໍ່ການຄ້າ (TBT) ກ່ອນການນໍາເຂົ້າ ແລະ ການສົ່ງອອກ**

ຜູ້ນໍາເຂົ້າ ຫຼື ຜູ້ສົ່ງອອກ ຕ້ອງຍື່ນຄໍາຮ້ອງຕໍ່ຂະແໜງການກ່ຽວຂ້ອງ ກ່ອນຈະນໍາເຂົ້າ ຫຼື ສົ່ງອອກສິນຄ້າ ໃນແຕ່ລະຄັ້ງ ຕາມລາຍການສິນຄ້າທີ່ໄດ້ກໍານົດໃນຕາຕະລາງຂອງຂໍ້ຕົກລົງສະບັບນີ້ ໂດຍປະກອບເອກະສານໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມລະບຽບການຂອງຂະແໜງການກ່ຽວຂ້ອງ.

**ມາດຕາ 8 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າຕ່າງປະເທດ, ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອເຜີຍແຜ່ແນະນໍາ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 9 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນເປັນຕົ້ນໄປ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ກະຊວງອຸດສາຫະກໍາ ແລະ ການຄ້າ
ລັດຖະມົນຕີ

ມະໄລທອງ ກົມມະສິດ